## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 29 ກໍຣະກົດ 2007 (7-29-2007)

# <u>ເຫັນດີຕາມຫລັກການ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ກິຈການ 15:1-2, 4-5, 12-15ກ, 23-29

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ການແກ້ໄຂຄວາມຂັດແຍ່ງ ຄຣິສຕະຈັກຕ້ອງຍອມຮັບຄວາມຈິງທີ່ສຳຄັນໃນພຣະຄັມພີແລະບໍ່ມີຂໍ້ແມ້ໃດໆ

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ເຮັດພາກສ່ວນຂອງທ່ານໃນໂບດຕາມພຣະປະສົງຂອງພຣະເຈົ້າໂດຍ....

- ຮູ້ຈັກເຖິງຄວາມສຳຄັນຂອງຄວາມເຊື່ອທີ່ໂບດຈະຕ້ອງເຫັນດີນຳກັນ ແລະ...
- ຕ້ອງອ່ານແລະສຶກສາພຣະຄັມພີເພື່ອຈະໄດ້ຍຶດໝັ້ນຢູ່ໃນຄວາມຈິງນັ້ນ

## <u>ບົດນຳ</u>

ເປັນເວລາຫລາຍເດືອນທີ່ໂບດບັບຕິສນ້ອຍແຫ່ງນຶ່ງໄດ້ໂອ້ລົມປຶກສາກັນວ່າ ຈະຊອກຫາສິດຍາພິບານໃໝ່ມາເປັນສິດຍາພິບານໃນໂບດຫລືບໍ່. ເມື່ອໄດ້ຢັ່ງເບິ່ງຄະແນນສຽງທັງສອງຝ່າຍ, ຝ່າຍທີ່ຢາກໄດ້ແລະຝ່າຍທີ່ບໍ່ຢາກໄດ້ ມີຄະແນນສຽງເທົ່າກັນ.

"*ພວກເຮົາຊະນະແລ້ວ* " ເດັກນ້ອຍຄົນນຶ່ງໃນກຸ່ມນັ້ນໄດ້ຮ້ອງຂຶ້ນ. ເປັນໜ້າເສົ້າໃຈ, ທີ່ເດັກນ້ອຍຄົນນີ້ໄດ້ສະແດງອອກເຖິງຄວາມເຫັນໃຈຕໍ່ຜູ້ໃຫຍ່ບາງຄົນໃນກຸ່ມນັ້ນ.

ທ່ານເຄີຄິດແນວໃດ? ເມື່ອມີຄວາມຂັດແຍ່ງກັນເກີດຂຶ້ນພາຍໃນໂບດ ມີກຸ່ມໃດກຸ່ມນຶ່ງບໍ່ ທີ່ໄດ້ຮັບໄຊຊະນະ? ແມ່ນຫລືວ່າຄືຜົນທີ່ຕາມມາຂອງການຂັດແຍ່ງທີ່ເກີດຂຶ້ນໃນໂບດ? ພວກເຮົາຈະຫລີກເວັ້ນຜົນທີ່ຕາມມາດັ່ງກ່າວນີ້ໄດ້ຄືແນວໃດ? ບົດຮຽນນີ້ຈະຊີ້ໃຫ້ເຫັນຫລັກການອັນສຳຄັນເຖິງຄວາມສຳເຣັດໃນການແກ້ໄຂບັນຫາຄວາມຂັດແຍ່ງ.

## <u>ສຶກສາພຣະຄັມພີ</u>

### 1. <u>ຮັບຮູ້ວ່າມີການຂັດແຍ່ງ</u> ( ກິຈການ 15:1-2, 4-5 )

ໂປໂລແລະບາຣະນາບາໄດ້ປະກາດກັບຄົນຕ່າງຊາດວ່າ "*ແລະໂດຍພຣະອົງນັ້ນທຸກຄົນທີ່ເຊື່ອຈະໄດ້ຖືກຊົງຊໍາຣະທຸກຢ່າງ ຊຶ່ງຈະຊໍາຣະບໍ່ໄດ້ຕາມບັນຍັດຂອງໂມເຊ.*" (ກິຈການ 13:39) ເຖິງຢ່າງໃດກໍຕາມ, ໃນເວລານັ້ນ, ບັນດາຜູ້ຊາຍຄົນຢິວໄດ້ມາທີ່ເມືອງອັນຕີໂອເຊັຽແລ້ວປະກາດຕໍ່ຜູ້ທີ່ເຊື່ອທັງຫລາຍວ່າພວກເຂົາຕ້ອງຍຶດໝັ້ນຢູ່ກັບປະເພນີທີ່ໂມເຊໄດ້ກ່າວໄວ້ຈຶ່ງຈະໄດ້ຮັບຄວາມພົ້ນຄື ພິທີຕັດ. ຕາມທັມມະດາແລ້ວ ໂປໂລແລະບາຣະນາບາບໍ່ເຫັນດີນຳບັນດາຄົນຢິວເຫລົ່ານີ້ທີ່ເປັນຄຣູສອນ (ທີ່ເອີ້ນກັນວ່າພວກຢູດາຍ). **ເຂົາ ເກີດການໂຕ້ແຍ້ງຜິດຖຽງກັນຫລາຍ**. ໂບດທີ່ເມືອງອັນຕີໂອເຊັຽ ໄດ້ສົ່ງໂປໂລແລະບາຣະນາບາໄປຂໍຄຳປຶກສານຳບັນດາຜູ້ນຳໂບດທີ່ກຸງເຢຣູຊາເລັມ ເພື່ອຊ່ວຍແກ້ໄຂບັນຫາດັ່ງກ່າວນີ້.

ມີເຣື່ອງສຳຄັນຢູ່ຫລາຍຢ່າງທີ່ມີຄວາມຂັດແຍ່ງກັນ. ເປັນໄປໄດ້ບໍ່ທີ່ຄົນຕ່າງຊາດແລະພວກຢິວຈະສືບຕໍ່ໃນ

ການນະມັສການຮ່ວມກັນ? ຄຣິສຕຽນພຽງແຕ່ເປັນລັດທິນຶ່ງເທົ່ານັ້ນບໍ ທີ່ແຕກອອກມາຈາກສາສນາຍິວ? ພວກຍິວຈະຍອມຮັບວ່າພວກຕ່າງຊາດມີຄວາມເຊື່ອ "ເທົ່າທຽມ" ກັນກັບເຂົາເຈົ້າຫລືບໍ່? ຈະຕ້ອງເອົາການປະຕິບັດເພີ້ມໃສ່ກັບຄວາມເຊື່ອບໍ ຈຶ່ງຈະໄດ້ຮັບຄວາມລອດພົ້ນ? ຄວາມລອດພົ້ນແມ່ນສຳລັບຄົນຈຳນວນນຶ່ງທີ່ຖືກເລືອກເທົ່ານັ້ນບໍ ຫລືວ່າສຳລັບຄົນທົ່ວໂລກ? ໂບດຄວນຈະແກ້ໄຂບັນຫາການຂັດແຍ່ງກັນແນວໃດ ຈຶ່ງຈະບໍ່ມີການແຕກແຍກກັນ?

ຈະເຫັນໄດ້ຢ່າງຈະແຈ້ງວ່າ ຄົນຍິວໄດ້ຍຶດຫມັ້ນວ່າຜູ້ເຊື່ອທີ່ເປັນຄົນຕ່າງຊາດຕ້ອງຮັບພິທີຕັດ ຝ່າຍໂປໂລກັບບາຣະນາບາເຊື່ອວ່າຄວາມພົ້ນໄດ້ມາໂດຍທາງຄວາມເຊື່ອໃນອົງພຣະເຢຊູເທົ່ານັ້ນ ດັ່ງນັ້ນບັນຫານີ້ຈະຕ້ອງມີການແກ້ໄຂ. ເຂົາເຈົ້າເຫັນວ່າການຂັດແຍ່ງກັນຢ່າງຮຸນແຮງນີ້ຈະທຳລາຍຄວາມເປັນອັນນຶ່ງອັນດຽວກັນພາຍໃນໂບດ ຖ້າຫາກບັນຫານີ້ບໍ່ໄດ້ຮັບການແກ້ໄຂ. ຫລັກຄວາມເຊື່ອດັ່ງກ່າວນີ້ມີຄວາມສຳຄັນຫລາຍ ເພາະວ່າມັນມີສ່ວນກ່ຽວຂ້ອງໂດຍກົງກັບຄວາມລອດພົ້ນ.

ການຂັດແຍ່ງກັນໃນໂບດສາມາດເກີດຂຶ້ນໄດ້. ການແຕກແຍກກັນກໍສາມາດເກີດຂຶ້ນໄດ້ເພາະລະດັບຖານະແລະຜິວພັນທີ່ແຕກຕ່າງກັນ. ເຣື່ອງເລັກນ້ອຍທີ່ບໍ່ເປັນແກ່ນສານກໍສາມາດເຮັດໃຫ້ເກີດຄວາມແຕກແຍກໄດ້ເຫມືອນກັນ. ເປັນຫນ້າເສົ້າໃຈນຳ ທີ່ຫລາຍໆ ໂບດໄດ້ແຕກແຍກກັນເພາະວ່າບັນຫາການຂັດແຍ່ງບໍ່ສາມາດແກ້ໄຂໄດ້ ຈົນເຮັດໃຫ້ການສາມັກຄີທັມກັນຣະຫວ່າງຜູ້ທີ່ເຊື່ອມີຄວາມແຕກແຍກກັນ.

ເພື່ອຈະປະສົບກັບຄວາມສຳເຣັດໃນການແກ້ໄຂບັນຫາຄວາມຂັດແຍ່ງ ທຸກຄົນທີ່ມີສ່ວນກ່ຽວຂ້ອງຈະຕ້ອງມີຄວາມເຕັມໃຈທີ່ຈະແກ້ໄຂບັນຫານຳກັນຢ່າງແທ້ຈິງ. ເມື່ອກຸ່ມໃດກຸ່ມນຶ່ງບໍ່ສາມາດແກ້ໄຂບັນຫາໄດ້ ເຂົາເຈົ້າຄວນຈະປຶກສານຳບັນດາຜູ້ນຳຝ່າຍຈິດວິນຍານຢູ່ໃນໂບດ. ແຕ່ລະຄົນທີ່ມີຄວາມຂັດແຍ່ງຄວນມີຄວາມເຕັມໃຈທີ່ຈະຮັບຄຳປຶກສາຈາກຜູ້ນຳຝ່າຍຈິດວິນຍານຢ່າງແທ້ຈິງ.

ແຕ່ບໍ່ເປັນດັ່ງທີ່ເຮົາຄິດ, ການຂັດແຍ່ງກັນໃນໂບດຫລາຍຄັ້ງບໍ່ສາມາດຈະແກ້ໄຂໄດ້ ຍ້ອນວ່າບາງຄົນບໍ່ເຕັມໃຈທີ່ຈະປ່ຽນແປງ ເຖິງແມ່ນຈະນຳເອົາຫລັກຄຳສອນໃນພຣະຄັມພີມາຊ່ວຍ ກໍຍັງແກ້ໄຂບໍ່ໄດ້. ບາງຄົນກໍຍຶດຫມັ້ນຢູ່ທີ່ໃຈແຂງກະດ້າງຂອງຕົນ ບໍ່ອ່ອນນ້ອມ, ບໍ່ຮັບຄຳແນະນຳທາງຈິດວິນຍານ, ແລະບໍ່ຍອມຮັບຟັງເຫດຜົນໃດໆ ທັງສິ້ນ. ບາງຄົນບໍ່ຍອມຮັບເອົາຄຳສອນໃນພຣະຄັມພີເພື່ອຊ່ອຍແກ້ໄຂບັນຫານັ້ນ ປ່ອຍໃຫ້ອາລົມອັນຮຸນແຮງຂອງຕົນຄວບຄຸມຈິດໃຈ. ຍາມໃດມີການຂັດແຍ່ງເກີດຂຶ້ນ, ພຣະເຈົ້າບໍ່ໄດ້ຮັບພຣະກຽດ, ໂບດໄດ້ຮັບຄວາມຫຍຸ້ງຍາກລຳບາກ.

ການເປັນອັນນຶ່ງອັນດຽວກັນໃນໂບດບໍ່ຫມາຍເຖິງວ່າທຸກຢ່າງຕ້ອງຄືກັນຫມົດ, ແຕ່ຫມາຍເຖິງວ່າຍິນດີທີ່ຈະແກ້ໄຂບັນຫາແລະສືບຕໍ່ເຮັດວຽກຮ່ວມກັນ. ພຣະກາຍຂອງພຣະຄຣິດໄດ້ຮັບຄວາມເຈັບປວດເມື່ອຄົນໃດຄົນນຶ່ງບໍ່ກ່ຽວຂ້ອງພົວພັນ ຫລືຕັດຂາດຈາກຄົນທີ່ບໍ່ເຫັນດີນຳຕົນ. ຄຣິສຕຽນສາມາດທີ່ຈະບໍ່ເຫັນດີນຳໃນສິ່ງທີ່ຕົນບໍ່ມັກ ແຕ່ເຮົາຄວນຈະຕັດສິນໃຈຕອບສນອງໃນເຣື່ອງນັ້ນໂດຍບໍ່ເຫັນແກ່ຜົນປໂຍດຂອງຕົນແຕ່ຝ່າຍດຽວ.

**2. <u>ເອົາພຣະຄັມພີເປັນຫລັກ:</u>** ( ກິຈການ 15:12-15ກ )

ຫລັງຈາກໄດ້ໂຕ້ຖຽງກັນຢ່າງຫລວງຫລາຍໃນໂບດທີ່ກຸງເຢຣູຊາເລັມ ເປໂຕໄດ້ປະກາດວ່າພຣະເຈົ້າໄດ້ຮັບເອົາຄົນຕ່າງຊາດເຂົ້າໃນຄວາມລອດພົ້ນແລະເພິ່ນໄດ້ກ່າວສລູບວ່າ *"ແຕ່ພວກເຮົາເຊື່ອວ່າເຮົາຈະໄດ້ພົ້ນໂດຍພຣະຄຸນຂອງພຣະອົງເຈົ້າເຢຊູເຫມືອນຢ່າງເຂົາ."* (ກິຈການ 15:11) ແລ້ວໂປໂລແລະບາຣະນາບາກໍຢືນຢັນເຖິງຄວາມຈິງດັ່ງກ່າວນີ້ ໂດຍກ່າວເຖິງເຣື່ອງທີ່ພຣະເຈົ້າຊົງທຳງານຖ້າມກາງຄົນຕ່າງຊາດໃນຂະນະທີ່ເພິ່ນເດີນທາງໄປປະກາດຂ່າວປະເສີດ. ຢາໂກໂບກໍໄດ້ສນັບສນູນຄຳກ່າວອ້າງນັ້ນວ່າ **"ຄຳຂອງຜູ້ປະກາດພຣະທັມກໍຖືກຕ້ອງກັບເຣື່ອງນີ້."**

ພວກເຮົາຕ້ອງລະວັງວ່າ ພວກເຮົາຈະບໍ່ຖືວ່າເປັນຄວາມຈິງ ຕາມຄວາມຮູ້ສຶກ, ຕາມປະສົບການ ແລະຕາມຄວາມຄິດຂອງພວກເຮົາ. ແທ້ຈິງແລ້ວ ເຮົາອາດຈະມີຄວາມຮູ້ສຶກຫລືຄິດວ່າມີບາງສິ່ງທີ່ເປັນຈິງ ແຕ່ບໍ່ຫມາຍເຖິງວ່າສິ່ງນັ້ນຈະເປັນຫລັກຖານຕໍ່ **ຄວາມຈິງ** ສເມີໄປ ຄວາມຮູ້ສຶກເປັນສິ່ງທີ່ບໍ່ແນ່ນອນ. ເມື່ອເວົ້າເຖິງຄວາມເຊື່ອ, ສິ່ງທີ່ເປັນຈິງບໍ່ໄດ້ຂຶ້ນຢູ່ກັບຄວາມຮູ້ສຶກແລະຄວາມຄິດຂອງເຮົາ ແຕ່ຂຶ້ນຢູ່ກັບວ່າພຣະເຈົ້າຄິດແນວໃດແລະພຣະອົງແມ່ນຜູ້ໃດ.

ບາງຄົນຖືວ່າຄວາມເຂົ້າໃຈເລື່ອງຄວາມຈິງຂຶ້ນຢູ່ກັບຄວາມຮູ້ສຶກແລະປະສົບການຂອງລາວຫລາຍກວ່າເຫດ ແລະຜົນ. ຖ້າເຮົາສົງສັຍໃນປະສົບການຂອງບາງຄົນ ເຮົາສາມາດທີ່ຈະຊັ່ງຊາເບິ່ງຄວາມຈິງຂອງປະສົບການນັ້ນໄດ້ ວ່າມັນກົງກັບຄວາມຈິງຂອງພຣະເຈົ້າຫລືບໍ່ ຊຶ່ງພຣະອົງໄດ້ເປີດເຜີຍໄວ້ໃນພຣະຄຳຂອງພຣະອົງ(ພຣະຄັມພີ)

ພວກເຮົາຕ້ອງອ່ານແລະສຶກສາພຣະຄັມພີ ຖ້າພວກເຮົາຫາກຢາກປ່ຽນແປງຊີວິດແລະຮູ້ຈັກຄວາມຈິງ. ຖ້າ ປາສຈາກພຣະຄຳຂອງພຣະເຈົ້າແລ້ວ ເຮົາຈະເຫັນວ່າຄວາມຈິງນັ້ນມີຫລາຍຮູບຫລາຍແບບ ຂຶ້ນຢູ່ກັບວ່າເຮົາຈະໄປ ຮັບຄຳປຶກສາຈາກຜູ້ໃດ. ບາງຄົນອ້າງວ່າພຣະເຈົ້າໄດ້ເວົ້າກັບຕົນເປັນພິເສດ ແຕ່ຖ້າຂໍ້ພຣະຄັມພີບໍ່ໄດ້ຢືນຢັນ ຫລືຊອກ ຫາບໍ່ເຫັນໃນພຣະຄັມພີ ກໍຖືວ່າຄຳກ່າວອ້າງນັ້ນກໍບໍ່ໄດ້ມາຈາກພຣະເຈົ້າ. ໃນທີ່ສຸດ ພວກເຮົາແຕ່ລະຄົນຈະຕ້ອງຕັດ ສິນໃຈວ່າຊີວິດຂອງເຮົາຈະຂຶ້ນກັບພຣະຄຳຂອງພຣະເຈົ້າ ຫລືຈະຂຶ້ນຢູ່ກັບຄຳສອນອື່ນໆ . ພວກເຮົາຕ້ອງມີຊີວິດທີ່ ສອດຄ່ອງກັບພຣະປະສົງຂອງພຣະເຈົ້າເທົ່ານັ້ນພວກເຮົາຈຶ່ງຈະໄດ້ຮັບຊີວິດອັນຄົບສົມບູນທີ່ພຣະອົງຊົງປະທານໃຫ້.

ຖ້າເຮົາຫາກບໍ່ອ່ານແລະບໍ່ຕຶກຕອງພຣະຄຳຂອງພຣະເຈົ້າ ພວກເຮົາກໍບໍ່ຮູ້ຄວາມຈິງຂອງພຣະອົງ, ຖ້າພວກ ເຮົາບໍ່ຮູ້ຄວາມຈິງແລະບໍ່ຍອມເຊື່ອຟັງຄວາມຈິງຂອງພຣະອົງ ເຮົາຈະດຳເນີນຊີວິດເປັນທີ່ພໍພຣະທັຍພຣະເຈົ້າບໍ່ໄດ້. ພຣະທັມເພງສັຣເສີນກ່າວໄວ້ວ່າ *"ຂ້າພຣະອົງໄດ້ທ້ອນໂຮມພຣະຄຳຂອງພຣະອົງໄວ້ໃນໃຈຂອງຂ້າພຣະອົງ ເພື່ອຂ້າ ພຣະອົງຈະບໍ່ເຮັດບາບຕໍ່ສູ້ພຣະອົງ."* ( ພສສ 119:11)

ຄຣິສຕຽນສມັຍແລກໃນພຣະທັມກິຈການບົດທີ 15 ສາມາດແກ້ໄຂບັນຫາທີ່ຮຸນແຮງໄດ້ເພາະເຂົາເຈົ້າສແວງ ຫານ້ຳພຣະທັຍພຣະເຈົ້ານຳກັນ. ເຂົາເຈົ້າໄດ້ຮັບການແກ້ບັນຫາໂດຍພຣະເຈົ້າ ຊຶ່ງເປັນບັນຫາຂອງຄວາມແຕກຕ່າງ ອັນໃຫຍ່ຫລວງທີ່ເກີນຄວາມສາມາດຂອງເຂົາເຈົ້າ. ໂບດສາມາດແນສຸມໃສ່ການປະກາດຂ່າວປະເສີດແຫ່ງຄວາມ ລອດພົ້ນຕໍ່ຄົນທັງຫລາຍ ແທນທີ່ຈະທຸ້ມເທເຫື່ອແຮງໃສ່ໃນການຂັດແຍ່ງກັນ.

ຈະເປັນໜ້າອັບອາຍຫລາຍພຽງໃດ ຖ້າຫາກໂບດຍອມໃຫ້ການຂັດແຍ່ງເປັນອຸປສັກຂັດຂວາງການຮັບໃຊ້ ຄືການນຳເອົາຂ່າວປະເສີດອອກໄປສູ່ຄົນທັງປວງ. ແຕ່ກໍເປັນໜ້າສັຣເສີນ ທີ່ໂບດສາມາດແກ້ໄຂບັນຫາຄວາມຂັດ ແຍ່ງໄດ້ ເພາະວ່າສະມາຊິກໃນໂບດສແວງຫານ້ຳພຣະທັຍພຣະເຈົ້ານຳກັນ. ນີ້ແມ່ນກຸ່ມສາມັກຄີທັມທີ່ໄດ້ຖວາຍພຣະ ກຽດແດ່ອົງພຣະຜູ້ເປັນເຈົ້າ.

## 3. <u>ຮູ້ຈັກຄວາມຈິງ:</u> (ກິຈການ 15:23-29 )

ຄະນະກັມມະການໄດ້ສົ່ງຈົດໝາຍກ່ຽວກັບຄຣິສຕຽນຕ່າງຊາດພ້ອມດ້ວຍຄຳສັ່ງສີ່ຢ່າງ ຊຶ່ງໃນແຕ່ລະຢ່າງ ນັ້ນບໍ່ໄດ້ກ່ຽວຂ້ອງກັບຄວາມລອດພົ້ນແຕ່ຢ່າງໃດ. ຕາມຄວາມຈິງແລ້ວຄວາມລອດພົ້ນແມ່ນສຳລັບທຸກຄົນແລະພວກ ເຮົາໄດ້ຮັບຄວາມລອດພົ້ນໂດຍທາງຄວາມເຊື່ອບໍ່ແມ່ນດ້ວຍການເຮັດເອົາເອງເພື່ອເປັນການອວດອ້າງ. ແຕ່ຢ່າງໃດກໍ ຕາມ ຄຳສັ່ງເຫລົ່ານັ້ນໄດ້ຊ່ອຍທັງຄຣິສຕຽນຄົນຢິວແລະຄຣິສຕຽນຄົນຕ່າງຊາດໃຫ້ເຂົາເຈົ້າໄດ້ຮ່ວມສາມັກຄີທັມຊຶ່ງ ກັນແລະກັນ.

ບັນດາຜູ້ທີ່ເຊື່ອທັງໝົດຄວນຈະເຫັນຄວາມສຳຄັນໃນການຫລີກເວັ້ນຈາກ **ການຫລິ້ນຊູ້** ຊຶ່ງຄຳສັ່ງອື່ນໆ ນັ້ນ ອາດຈະເຂົ້າໃຈຍາກ. ການ**ບໍ່ກິນອາຫານທີ່ຖວາຍພຣະທຽມ, ບໍ່ກິນເລືອດ, ຫລືອາຫານອື່ນໆ ທີ່ແປກໆ** ນັ້ນບໍ່ເປັນຜົນ ດີຕໍ່ບັນດາຜູ້ທີ່ເຊື່ອທີ່ເປັນຄົນຢິວ. ສ່ວນຜູ້ທີ່ເຊື່ອຄົນຕ່າງຊາດກໍມີທາງເລືອກໄດ້ ແຕ່ການເລືອກຂອງເຂົາເຈົ້າຈະສົ່ງຜົນ ສະທ້ອນຕໍ່ຄວາມສັມພັນທີ່ເຂົາເຈົ້າມີຕໍ່ບັນດາຜູ້ທີ່ເຊື່ອທີ່ເປັນຄົນຢິວ. ຫລັງຈາກໄດ້ອ່ານຈົດໝາຍນັ້ນແລ້ວຄຣິສຕຽນ ຄົນຕ່າງຊາດກໍມີຄວາມປິຕິຊົມຊື່ນຈາກຄຳໜູນໃຈໃນຈົດໝາຍນັ້ນ (ກິຈການ 15:31) ໂດຍທີ່ບໍ່ເຫັນແກ່ຜົນປໂຍດ ຂອງຕົນແຕ່ຝ່າຍດຽວ, ເຂົາເຈົ້າເຫັນດີນຳກັບຄວາມຄິດເຫັນຂອງຄະນະກັມມະການໂບດທີ່ກຸງເຢຣູຊາເລັມ. ການກະ ທຳຂອງບັນດາຜູ້ທີ່ເຊື່ອເຫລົ່ານີ້ໄດ້ເປັນທີ່ຖວາຍພຣະກຽດແດ່ພຣະເຈົ້າ ແລະໄດ້ຫັນປ່ຽນໂບດໃນສມັຍເລີ້ມແລກໃຫ້ມຸ້ງ ໜ້າໄປໃນທິດທາງທີ່ດີ.

ການແກ້ໄຂບັນຫາການຂັດແຍ່ງບໍ່ຄວນຈະຢູ່ໃນສະພາບຄວາມຈິງທີ່ຕົກລົງກັນບໍ່ໄດ້. ຍົກຕົວຢ່າງເຊັ່ນ, ເຮົາ ບໍ່ຄວນຈະຕໍ່ລອງ ຫລືປະນີປະນອມກັບຄວາມຈິງຂອງຂ່າວປະເສີດ *"ດ້ວຍວ່າທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ*

*ກໍຍ້ອນພຣະຄຸນທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້ ຄວາມເຊື່ອນັ້ນບໍ່ໃຊ່ມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້.* " ( ເອເຟໂຊ 2:8-9)

ພວກເຮົາຍອມຮັບຄວາມແຕກຕ່າງທາງວັທນະທັມຂອງຜູ້ທີ່ເຊື່ອອື່ນໆ ແລະເຮົາສາມາດຮ່ວມສາມັກຄີທັມຊຶ່ງກັນແລະກັນໄດ້. ເຮົາສາມາດສັງເກດເຫັນຄວາມແຕກຕ່າງຣະຫວ່າງຊາວໜຸ່ມແລະຜູ້ໃຫຍ່ພາຍໃນໂບດ ເຊັ່ນ ດົນຕຣີ, ການນຸ່ງເຄື່ອງ ແຕ່ເຮົາກໍຍອມຮັບຊຶ່ງກັນແລະກັນໄດ້. ບາງຄັ້ງຄວາມແຕກຕ່າງດັ່ງກ່າວນີ້ໄດ້ນໍາໄປສູ່ການໂຕ້ຖຽງທີ່ເຜັດຮ້ອນ. ຖ້າຫາກບັນດາຜູ້ທີ່ເຊື່ອບໍ່ມີຄວາມລະມັດລະວັງ, ຈະເຮັດໃຫ້ຄວາມແຕກຕ່າງນໍາໄປສູ່ຄວາມຂັດແຍ່ງ, ຄວາມຂົມຂື່ນ ແລະແຕກຄວາມສາມັກຄີກັນ. ບໍ່ສົມຄວນໃຫ້ຄວາມແຕກຕ່າງດັ່ງກ່າວສິ່ງຜົນໃຫ້ເກີດຄວາມຂັດແຍ່ງ ແລະແຕກແຍກກັນຖ້າມກາງບັນດາຜູ້ທີ່ເຊື່ອ.

ຄຣິສຕຽນບໍ່ສົມຄວນມີໃຈທີ່ແຂງກະດ້າງ (ເປັນຄົນຕັບດຽວ) ທີ່ເອົາແຕ່ໃຈຕົນເອງທີ່ວ່າ "*ຖ້າຂ້ອຍບໍ່ມັກໃນສິ່ງນີ້ ມັນກໍບໍ່ດີສໍາລັບຄົນອື່ນເຫມືອນກັນ* " ຖ້າຫາກເປັນເຣື່ອງສ່ວນຕົວ ຫລືເປັນສິ່ງທີ່ເຮົາບໍ່ມັກ ເຮົາກໍຄວນເຫັນແກ່ຜົນປໂຍດຂອງຄົນອື່ນນໍາ ເພື່ອເຫັນແກ່ຄວາມສາມັກຄີທັມທີ່ມີຕໍ່ກັນແລະກັນ.

**ບົດຮຽນຊີວິດ**

ຄວາມຂັດແຍ່ງໃນໂບດເປັນສິ່ງທີ່ຫລີກລ້ຽງບໍ່ໄດ້ ຄວາມແຕກຕ່າງດ້ານຄວາມຄິດ ຫລືຄວາມເຊື່ອ ສາມາດເປັນອຸປສັກຕໍ່ຄວາມເປັນອັນນຶ່ງອັນດຽວກັນພາຍໃນໂບດ. ດ້ວຍການຍອມຮັບຄວາມຂັດແຍ່ງ ເມື່ອມັນເກີດຂຶ້ນ, ຊັ່ງຊາສະພາບການນັ້ນໃສ່ກັບຄວາມຈິງໃນພຣະຄັມພີແລະຍຶດໝັ້ນຢູ່ໃນຄວາມຈິງອັນສໍາຄັນນັ້ນ ຊຶ່ງທຸກຄົນເຫັນດີນໍາກັນ ບັນດາຜູ້ທີ່ເຊື່ອກໍຈະສາມາດແກ້ໄຂບັນຫາຄວາມຂັດແຍ່ງໄດ້ຢ່າງເຫມາະສົມ. ຜູ້ເຊື່ອທີ່ເຕີບໃຫຍ່ແລ້ວ ຈະສແວງຫາການແກ້ໄຂບັນຫາຄວາມຂັດແຍ່ງໃນທາງທີ່ຖວາຍພຣະກຽດພຣະເຈົ້າແລະຮັກສາຄວາມສາມັກຄີໄວ້. ການສຶກສາພຣະຄັມພີໃນອາທິດນີ້ ຊີ້ໃຫ້ເຮົາເຫັນຄວາມແຕກຕ່າງແນວໃດແດ່? ພວກເຮົາຈໍາເປັນຕ້ອງ....

- ຍອມຮັບວ່າມີຄວາມຂັດແຍ່ງເກີດຂຶ້ນໃນໂບດ
- ຈື່ໄວ້ວ່າພຣະຄັມພີມີຄໍາຊີ້ນໍາໃນການແກ້ໄຂບັນຫາການຂັດແຍ່ງ
- ຮັບເອົາຄໍາແນະນໍາຈາກຄຣິສຕຽນທີ່ເຕີບໃຫຍ່ຝ່າຍວິນຍານ

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PS